

ໝາກສ່ອຍ -Streblus ilicifolius (J.E.Vidal) Corner, Moraceae

# ສວນພຶກສາຊາດ ຜາຕັດແກ້

ສະບັບທີ 6: ມິຖຸນາ 2014

ເຖິງແມ່ນວ່າໃນບົດກະວີ ແລະ ສິນລະປະວັດທະນາທຳເປັນລັກສະນະທຳມະຊາດຢູ່ໃນຕົວ, ເໝືອນດອກໄມ້ເບັ່ງບານທີ່ບໍ່ມີພົມແດນ ແລະ ຕົ້ນໄມ້ທີ່ກຳລັງຕັ້ງສະຫງ່າຢູ່ເທິງທ້ອງຟ້າ. ບໍ່ມີສິ່ງໃດທີ່ຈະປະເສີດຄືວິທະຍາສາດ ແລະ ການອອກແບບສວນທີ່ປາສະຈາກການປະສົມສີ, ສະຕິອາລົມການແຕ່ງບົດປະພັນ ແລະ ໂຄງຮ່າງ, ສິ່ງດັ່ງກ່າວສະແດງເຖິງການພົວພັນລະຫວ່າງທຳມະຊາດ ແລະ ວັດທະນາທຳ.

ທ່ານ ເຣັນຣິກ ກາເດັນລາ (ຜູ້ອຳນວຍການໃຫຍ່)
ສວນພຶກສາຊາດຜາຕັດແກ້, ຫຼວງພະບາງ, ສປປ ລາວ

## ສາລະບານ

1-3 ກ່ຽວກັບຜາຕັດແກ້

4-14 ການເຄື່ອນໄຫວຂອງຜາຕັດແກ້

15-28 ດອກພືດຕະກູນຂີງ-ຂ່າໃນສວນພຶກສາຊາດຜາຕັດແກ້

29 ເວທີຫຼວງພະບາງ

*ວາລະສານຜາຕັດແກ້ອອນໄລດ໌ 3 ສະບັບຕໍ່ປີທີ່ເວບໄຊດ໌ຂອງຜາຕັດແກ້. ຫາກທ່ານມີຫົວຂໍ້ ສາລະຫນ້າຮູ້ກ່ຽວກັບພຶກສາຊາດ ແລະ ສິ່ງແວດລ້ອມ, ທີ່ເປັນຂ່າວທົ່ວໄປສາມາດ ລົງໃນວາລະສານຜາຕັດແກ້ໄດ້.* www.pha-tad-ke.com



ຫວ່າ -Syzygium sp, Mytraceae



ໄຮໃບໃຫຍ່ -Ficus glaberrima, Moraceae

## ສະມາຄົມເພື່ອນຜາຕັດແກ້

ສະມາຄົມເພື່ອນຜາຕັດແກ້ໄດ້ຖືກສ້າງຕັ້ງຂຶ້ນໃນເດືອນ ມັງກອນ ປີ 2010 ທີ່ປະເທດຝຣັ່ງ, ຕໍ່ມາ ໃນປີ 2011 ເດືອນກໍລະກົດ ທີ່ປະເທດ ເນີເທີແລນ, ໃນເດືອນ ກັນຍາ ທີ່ປະເທດລາວ. ການສ້າງສະມາຄົມຊ່ວຍເຫຼືອໂດຍບໍ່ຫວັງຜົນກຳໄລ ຂອງຜາຕັດແກ້ແມ່ນເພື່ອສົ່ງເສີມ ທາງດ້ານການຄົ້ນຄວ້າວິທະຍາສາດ, ວັດທະນະທຳລວມໄປເຖິງການອະນຸລັກພືດພັນຂອງປະເທດລາວໂດຍສະເພາະແມ່ນແຂວງຫຼວງພະບາງ. ນອກນັ້ນ ສະມະຄົມເພື່ອນຜາຕັດແກ້ ຍັງ ໃຫ້ການສະໜັບສະໜູນໃນການເຮັດກິດຈະກຳປູກຈິດສຳນຶກໃຫ້ແກ້ນັກຮຽນໃນການອະນຸລັກທຳມະຊາດ ແລະ ສິ່ງແວດລ້ອມ.

*ການຊ່ວຍເຫຼືອຂອງ ສະມາຄົມເພື່ອນຜາຕັດແກ້ ຍັງຈະໄດ້ຮັບການສະໜັບສະໜູນເພີ່ມຂຶ້ນຕໍ່ໆໄປ.*

ຕິດຕໍ່: ເພັດສະພອນ ມະໂນລາ
contact@friends-pha-tad-ke.com
ຂໍ້ມູນເພີ່ມເຕີມ: www.friends-pha-tad-ke.com









ເດືອນພະຈິກ 29 / ເດືອນທັນວາ 14, 2013

**ການແລກປ່ຽນບົດຮຽນຢູ່ທີ່ສວນພືກສາຊາດສິງກະໂປ**

ທ່ານ ສົມດີ ອຸດົມສັກ (ຫົວໜ້າຊາວສວນ), ທ່ານ ຊາຍສະມອນ ອິນທະວົງ ແລະ ທ່ານ ຄຳພາດ ທອງຈັນ (ນັກພືດສວນ), ໄດ້ຖືກເຊີນເຂົ້າຮ່ວມການແລກປ່ຽນບົດຮຽນຢູ່ທີ່ສວນພືກສາຊາດສິງກະໂປ ກ່ຽວກັບການອອກແບບສວນ ແລະ ວິທີການປູກພືດ. ເຊິ່ງຊີ້ນຳໂດຍ ທ່ານ *Dr. Nura Abdul Karim* (ຜູ້ຈັດການຂໍ້ມູນພືດ) ພວກເຂົາເຈົ້າໃຊ້ເວລາ 2 ອາທິດເຮັດວຽກຮ່ວມກັບຫຼາຍພະແນກພາຍໃນສວນອັນວິເສດແຫ່ງນີ້.

ທ່ານ Tan Jiew-Hoe ໄດ້ເປັນກຽດ ແລະ ເສຍສະຫຼະເວລາອັນມີຄ່ານຳພາພວກເຂົາເຈົ້າໄປທ່ຽວຊົມ Garden on the Bay ທີ່ຫາກໍ່ສ້າງສຳເລັດໃນໄວໆນີ້ ນອກຈາກນັ້ນ ເພິ່ນຍັງໄດ້ພາໄປທ່ຽວຊົມສວນສາທາລະນະຫຼາຍໆບ່ອນອີກດ້ວຍ.

Funding: Singapore Botanic Garden, Brennan Family Foundation/APHEDA and the honourable Mr. Tan Jiew-Hoe (president of the Singapore Horticultural Society).








ເດືອນມັງກອນ 5/9, 2014

**ການເຝິກອົບຮົມຢູ່ທີ່ສູນຢາພື້ນເມືອງ, ນະຄອນຫຼວງວຽງຈັນ**

ທ່ານ ກິດຕິສັກ ພຸດທະວົງ (ນັກພຶກສາສາດ) ແລະ ທ່ານ ສະລັດ ປັນຍາຊິນ (ນັກພືດສອນ) ຮ່ວມກັບ ບັນດາອາຈານຈາກວິທະຍາໄລກະສິກຳ ແລະ ປ່າໄມ້ ພາກເໜືອ ໄດ້ເຂົ້າຮ່ວມການເຝິກອົບຮົມຢູ່ທີ່ສູນຢາ ພື້ນເມືອງນະຄອນຫຼວງວຽງຈັນ.

ສູນຢາພື້ນເມືອງໄດ້ສ້າງຕັ້ງຂຶ້ນໃນປີ 1976 (TMRC) ເຊິ່ງມີພຽງແຕ່ສະຖາບັນແຫ່ງດຽວໃນລາວທີ່ໄດ້ທຸ້ມ ເທເຂົ້າໃນການສຶກສາຄົ້ນຄວ້າກ່ຽວກັບຢາພື້ນເມືອງ ລາວ ແລະ ການນຳໃຊ້ພືດເປັນຢາຢ່າງຕໍ່ເນື່ອງ. ຈຸດພິເສດໃນການເຝິກອົບຮົມໃນຄັ້ງນີ້ແມ່ນການເຮັດ ຜະລິດຕະພັນຈາກພືດ, ເຊັ່ນ ການຜະລິດຊາສະໝຸນ ໄພ, ຢາລູກກອນ ແລະ ອື່ນໆ.

Funding: SURAFCO / NAFC









ເດືອນມັງກອນ 10/19, 2014

**ກອງປະຊຸມປຶກສາຫາລືກ່ຽວກັບສວນພຶກສາຊາດ ແລະ ການປ່ຽນແປງຂອງສະພາບດິນຟ້າອາກາດ ທີ່ສວນພຶກສາຊາດສິບສອງພັນນາ ຄັ້ງທີ III**

ທ່ານ ອິນສະໄຫວ ສິດທິໂອຫານ (ໜ່ວຍງານ ນິເວດວິທະຍາ)ທ່ານ ສົມດີ ອຸດົມສັກ (ຫົວໜ້າຊາວ ສວນ) ທ່ານ ກິດຕິສັກ ພຸດທະວົງ ແລະ ທ່ານແກ້ວອຸດອນ ສູວັນນະກຸມມານ (ນັກພຶກສາສາດ) ໄດ້ຖືກ ເຊີນເຂົ້າຮ່ວມໂດຍທາງສວນພຶກສາຊາດສິບສອງພັນນາ ເຊິ່ງເປັນໂອກາດທີ່ສຳຄັນທີ່ສຸດໃນການພົບປະ ກັບບັນດານັກວິທະຍາສາດທີ່ມາຈາກທົ່ວທຸກມູມໂລກ ແລະ ທ່ານ ແກ້ວອຸດອນ ສູວັນນະກຸມມານ ຍັງໄດ້ນຳ ສະເໜີທາງໂພດສເຕີກ່ຽວກັບການອະນຸລັກພືດຕະກຸນ ຂີງ-ຂ່າ ໃນ ສປປ ລາວ.

ພາຍຫຼັງກອງປະຊຸມ ບັນດາພວກທ່ານຍັງໄດ້ໄປທ່ຽວ ຊົມສວນກ້າເບ້ຍໄມ້ ແລະ ພິພິດຕະພັນພືດ ແລະ ໄດ້ພົບກັບ ທ່ານ Dr. Akihiro Nakamura ເຊິ່ງໄດ້ ປຶກສາຫາລືກ່ຽວກັບການຮ່ວມກັນໃນອະນາຄົດຢ່າງ ເປັນພິເສດອີກດ້ວຍ.

Funding: XTBG, PTK, Brennan Family Foundation/APHEDA







ເດືອນ 1/31, 2014

**ການເຝິກອົບຮົມກ່ຽວກັບການປູກພືດທີ່ສວນພຶກສາ ຊາດພະນາງເຈົ້າສິຣິກິດທີ່ຊຽງໃໝ່**

ພະນັກງານພືດສວນຈຳນວນ 4 ທ່ານ ຈາກສວນພຶກສາຊາດຜາຕັດແກ້ໄດ້ເຂົ້າຮ່ວມການເຝິກອົບຮົມເປັນເວລາ 1 ເດືອນ ມີຄື:
ທ່ານ ນາງ ໃຫຍ່ ວົງຈັນ, ທ່ານ ບຸນສີ ຄຳເຄື່ອງ,
ທ່ານ ນາງ ແວວ ດາລາວົງ ແລະ ທ່ານ ຊາຍສະໝອນ ອິນທະວົງ ໄດ້ຮັບການເຝິກອົບຮົມພາກປະຕິບັດຕົວຈິງຈາກພະນັກງານສວນພຶກສາຊາດພະນາງເຈົ້າສີຣິ ກິດກ່ຽວກັບການບົວລະບັດຮັກສາດອກເຜີ້ງ, ໄມ້ປະດັບ ແລະ ການປະສົມພັນພືດ.
ພວກເຂົາເຈົ້າຍັງໄດ້ໄປຢ້ຽມຢາມ ແລະ ທັດສະນະສຶກສາກ່ຽວກັບໂຄງການ ການອະນຸລັກ ແລະ ການນຳເອົາດອກເຜີ້ງຄືນສູ່ປ່າທີ່ດອຍອິນທະນົນ.ນອກຈາກນັ້ນ ທາງສວນພຶກສາຊາດພະນາງເຈົ້າສີຣິກິດຍັງໄດ້ຈັດຫາກິດຈະກຳຫຼາກຫຼາຍຢ່າງເຊັ່ນວ່າ: ໄປທັດສະນະສຶກສາຢູ່ທີ່ດອຍປຸຍ ແລະ ດອຍສຸເທບອີກດ້ວຍ.

Funding: QSBG, PTK and TABI









ເດືອນມີນາ 21/27, 2014

**ສວນພຶກສາຊາດ Sydney - Mount Annan**

Daniel Bishop (ຜູ້ຈັດການພຶດສວນ), Geoff Duggan (ຜູ້ຈັດການ ດ້ານວິຊາການ ແລະ ການວາງແຜນອອກແບບທິວທັດ) ແລະ Graeme Errington (ພະນັກງານ ດ້ານວິຊາການ ການສຶກສາ ຄົ້ນຄວ້າກ່ຽວກັບແກ່ນເມັດພັນຢູ່ທີ່ທະນາຄານພືດ) ໄດ້ມາຢ້ຽມຢາມສວນພຶກສາຊາດ ຜາຕັດແກ້ ເພື່ອປຶກສາຫາລືກ່ຽວກັບການຮ່ວມມືກັນໃນໄລຍະຍາວໃນການປູກພືດ ແລະ ປະເມີນຄວາມເປັນໄປໄດ້ກ່ຽວກັບການລິເລີ່ມສ້າງແຜນການເກັບລວບລວມແກ່ນເມັດພັນ ແລະ ທະນາຄານແກ່ນເມັດພັນອີກດ້ວຍ.
ທາງສວນພຶກສາຊາດ Sydney ເພິ່ນຍັງມີແຜນການເພື່ອສະໜັບສະໜູນການກໍ່ສ້າງສວນພຶກສາຊາດຢູ່ໃນຂົງເຂດຕາເວັນອອກສ່ຽງໃຕ້ຂອງອາຊີ, ໃນປະຈຸບັນພວກເຂົາໄດ້ເປັນຜູ້ຊີ້ນຳການກໍ່ສ້າງສວນພຶກສາຊາດຢູ່ Dalat ປະເທດຫວຽດນາມ ແລະ ຍັງໄດ້ເຮັດແຜນການເຝິກອົບຮົມຮ່ວມກັບ BGCI ແລະ ສວນພຶກສາຊາດສິງກະໂປອີກດ້ວຍ.

Funding: SRBG, HSBC Australia, PTK







ເດືອນມີນາ 24 / ເດືອນເມສາ 7, 2014

**ເຝິກອົບຮົມກ່ຽວກັບການອະນຸລັກຊີວະນາໆພັນ ແລະ ການຄຸ້ມຄອງປ່າສະຫງວນແຫ່ງຊາດໃນ ສປປ ລາວ ທີ່ມະຫາວິທະຍາໄລແຫ່ງຊາດ**

ທ່ານ ອິນສະໄຫວ ສິດທິໂວຫານ (ໜ່ວຍງານນິເວດວິທະຍາ ແລະ ຜູ້ຈັດການຫ້ອງການຂອງ PTK) ໄດ້ເຂົ້າຮ່ວມການເຝິກອົບຮົມຢູ່ທີ່ມະຫາວິທະຍາໄລແຫ່ງຊາດ ນະຄອນຫຼວງວຽງຈັນ ໃນການຮ່ວມມືກັບສາດສະດາຈານປະຈຳຄະນະວິທະຍາສາດ ແລະ ຄະນະປ່າໄມ້ ພ້ອມດ້ວຍ ລວມທັງການລົງພາກສະໜາມທີ່ປ່າສະຫງວນແຫ່ງຊາດພູເຂົາຄວາຍເປັນເວລາ 3 ວັນ. ມີ 18 ທ່ານຈາກ 6 ອົງການຈັດຕັ້ງໄດ້ເຂົ້າຮ່ວມໃນການເຝິກອົບຮົມໃນຄັ້ງນີ້.

Funding: PTK



ເດືອນ 23/29, 2014

**ການເຝິກອົບຮົມຂອງນັກບຳລຸງຮັກສາໄມ້ຢືນຕົ້ນທີ່ສ
ວນພຶກສາຊາດຜາຕັດແກ້**

ທ່ານ John Learned ຈາກ ປະເທດອາເມຣິກາໄດ້
ຈັດການເຝິກອົບຮົມກ່ຽວກັບການເບິ່ງແຍງຮັກສາ
ແລະ ສອນວິທີການຕັດແຕ່ງໄມ້ຢືນຕົ້ນໃຫ້ແກ່ພະ
ນັກງານຜາຕັດແກ້. ພະນັກງານຈາກພະແນກກະສິ
ກຳ ແລະ ປ່າໄມ້ ເມືອງຈອມເພັດກໍໄດ້ເຂົ້າຮ່ວມເຝິກ
ອົບຮົມໃນຄັ້ງນີ້.

ການບຳລຸງຮັກສາຕົ້ນໄມ້ແມ່ນວຽກງານທີ່ສຳຄັນຫຼາຍ
ຢູ່ພາຍໃນສວນ, ເພື່ອດູແລຮັກສາຕົ້ນໄມ້ໃຫ້ມີສຸຂະ
ພາບແຂງແຮງ, ເຊິ່ງຈະໃຫ້ພວກມັນມີຊົງພຸ່ມທີ່ສວຍ
ງາມ ແລະ ຈະເຮັດໃຫ້ມີໝາກຜົນຫຼາຍອີກຕື່ມ. ໄມ້
ຢືນຕົ້ນຈຳນວນຫຼາຍກວ່າ 300 ຕົ້ນ ໄດ້ລົງປູກຢູ່ໃນ
ປ່າທຳມະຊາດຂອງຜາຕັດແກ້ໃນໄລຍະປີທີ່ຜ່ານມາ
ແລະ ການບົວລະບັດຮັກສາແມ່ນພາລະກິດທີ່ສຳຄັນ
ໃນປະຈຸບັນ ແລະ ໃນອະນາຄົດເມື່ອຕອນພວກມັນ
ໃຫຍ່ ແລະ ມີອາຍຸຫຼາຍຂຶ້ນ.

Funding: PTK







ເດືອນພຶດສະພາ 1/31, 2014

**ການເຝິກອົບຮົມກ່ຽວກັບການປູກພືດທີ່ສວນພຶກສາຊາດພະນາງເຈົ້າສິຣິກິດທີ່ຊຽງໃໝ່**

ພະນັກງານພືດສວນຈຳນວນ 6 ທ່ານ ຈາກສວນພຶກສາຊາດຜາຕັດແກ້ໄດ້ເຂົ້າຮ່ວມການເຝິກອົບຮົມເປັນເວລາ 1 ເດືອນ ມີຄື: ທ່ານ ສົມພັນ ເຈີເຍຍຊີງ, ທ່ານ ທຸມພັນ ວົງທະວິຈິດ, ທ່ານ ສະລັດ ປັນຍາຊິນ, ທ່ານ ແສງທອງ ສຸລິນນະພູ ແລະ ທ່ານ ສີພັນ ບຸນທອງສີ ໄດ້ຮັບການເຝິກອົບຮົມພາກປະຕິບັດຕົວຈິງຈາກພະນັກງານສວນພຶກສາຊາດພະນາງເຈົ້າສິຣິກິດກ່ຽວກັບການບົວລະບັດພືດ ແລະ ການບຳລຸງຮັກສາພືດປ່າ, ພືດສະໝຸນໄພ ແລະ ຈັດຈຳແນກໄມ້ຢືນຕົ້ນຢູ່ເຂດເນີນສູງ. ທ່ານ ສົມພັນ ເຈີເຍຍຊີງ ແລະ ທ່ານ ສີພັນ ບຸນທອງສີ ໄດ້ເຂົ້າຮ່ວມການເຝິກອົບຮົມໃນໂຄງການຫຼວງ ກ່ຽວກັບເຟີນ (ຜັກກູດ) ຢູ່ທີ່ດອຍສຸເທບ. ນອກຈາກນີ້ ທ່ານ ສະລັດ ປັນຍາຊິນ ແລະ ທ່ານ ແສງທອງ ສຸວັນນະພູ ຍັງໄດ້ເຂົ້າຮ່ວມການເຝິກອົບຮົມກ່ຽວກັບ ພຶກສາສາດພື້ນບ້ານ ເຊິ່ງຈັດຂຶ້ນຢູ່ທີ່ສວນພຶກສາຊາດ ພະນາງເຈົ້າສິຣິກິດໃນວັນທີ 19 ຫາ 23 ເດືອນພຶດສະພາອີກດ້ວຍ.

Funding: QSBG, PTK and TABI









ເດືອນມິຖຸນາ 5/8, 2014

**ການມາຢ້ຽມຢາມ ແລະ ເຊັນ MOU ລະຫວ່າງ**
**ຜາຕັດແກ້ ແລະ ສະຖາບັນຄົ້ນຄວ້າວິທະຍາສາດ**
**ແລະ ເຕັກໂນໂລຊີແຫ່ງປະເທດໄທ**

ບັນດາລາຍຊື່ແຂກຜູ້ຊົງກຽດມີ:

**ທ່ານ ຍິ່ງວຸດ ສາວະປຣັກ**
ຜູ້ວ່າການ

**ທ່ານ ດຣ ສຸພາບ ອັດຈະຣິຍະສຣິພົງ**
ຮອງຜູ້ວ່າການວິໄຈ ແລະ ພັດທະນາດ້ານອຸດສາຫະກຳ
ຊີວະພາບ

**ທ່ານ ດຣ ປິຍະ ສະເລີມກລິ່ນ**
ປະທານຜູ້ຊ່ຽວຊານການດ້ານການຄົ້ນຄວ້າ

**ທ່ານ ສາຍັນ ຕັນພານິກ**
ຜູ້ອຳນວຍການ ພະແນກເຕັກໂນໂລຊີການກະເສດ

**ທ່ານ ດຣ ຈິດຕຣາ ວັນນະວິຈິດ**
ຜູ້ອຳນວຍການ ສຳນັກງານຮອງຮັບລະບົບຄຸນນະພາບ

**ທ່ານ ນາງ ຈັນຈິຣະ ສີໂນຈັນ**
ອຳນວຍການ ພະແນກພົວພັນຮ່ວມມືຕ່າງປະເທດ

**ທ່ານ ດຣ ມົນຕຣີ ແກ້ວດວງ**
ອຳນວຍການສະຖາບັນຄົ້ນຄວ້າລຳຕະຄອງ

**ທ່ານ ດຣ ປຣາໂມດ ໄຕຣບູນ**
ນັກຄົ້ນຄວ້າພະແນກເຕັກໂນໂລຊີການກະເສດ







ເດືອນມິຖຸນາ 9/14, 2014

**ການເຝິກອົບຮົມກ່ຽວກັບການຈັດການ**

ໃນການຮ່ວມມືລະຫວ່າງ PUM ແລະ LANITH ພວກເຮົາໄດ້ຈັດການເຝິກອົບຮົມກ່ຽວກັບການຈັດການຢູ່ທີ່ສວນພຶກສາຊາດຜາຕັດແກ້ ໂດຍການສິດສອນຂອງ AnneMarie Buschers ມາຈາກປະເທດເນເທີແລນ. ເປົ້າໝາຍຂອງການເຝິກອົບຮົມໃນຄັ້ງນີ້ແມ່ນແນໃສ່ບັນດາຜູ້ຈັດການໃນລະດັບກາງຂອງບັນດາບໍລິສັດ, ຫ້າງຮ້ານຕ່າງໆໃນການສ້າງ ແລະ ພັດທະນາທັກສະ ແລະ ຄຸນສົມບັດ ຫຼື ອຸປະນິໄສເພື່ອໃຫ້ມີຄວາມໝັ້ນໃຈ, ເປັນອິດສະລະ ແລະ ກ້າວໄປເຂົ້າສູ່ການເປັນຜູ້ນຳທີ່ມີອຸດົມການເຂົ້າໃນວຽກງານຂອງເຂົາເຈົ້າ. ຜູ້ເຂົ້າຮ່ວມການເຝິກອົບຮົມທີ່ຜາຕັດແກ້ໃນໄລຍະ 5 ມື້ນີ້ ເຊິ່ງມາຈາກຫຼາກຫຼາຍບໍລິສັດໃນຫຼວງພະບາງ ເປັນທີ່ຮູ້ຈັກ ຫຼື ຄຸ້ນເຄີຍກັນດີ ແລະ ຍັງມີການເຝິກອົບຮົມກ່ຽວກັບວຽກງານບໍລິການຕ້ອນຮັບຢູ່ທີ່ LANITH ໃນວັນທີ 2 ຫາ 6 ເດືອນມິຖຸນາທີ່ຜ່ານມາ.

Funding: PUM, LANITH and Participants







ເດືອນກໍລະກົດ 5/15, 2014

**ການເຝິກອົບການອອກແບບທິວທັດທີ່ຜາຕັດແກ້**

**Goustan Bodin** ນັກສະຖາປະນິກກ່ຽວກັບການອອກແບບທິວທັດເຊິ່ງມາຈາກບາງກອກ ເຊິ່ງຈະໄດ້ຈັດການເຝິກອົບຮົມກ່ຽວກັບການອອກແບບທິວທັດເປັນເວລາ 10 ມື້.

ເປົ້າໝາຍຂອງການເຝິກອົບຮົມແມ່ນເພື່ອແນໃສ່ບັນດາພະນັກງານຂອງຜາຕັດແກ້ ເພື່ອໃຫ້ຮູ້ວິທີການການອອກແບບທີ່ຖືກຕ້ອງໃນການປະຕິບັດຕົວຈິງກັບພືດ. ການເຝິກອົບຮົມຈະມີທາງດ້ານແງ່ມູມທິດສະດີ ແລະພາກປະຕິບັດຕົວຈິງ.

ການເຝິກອົບຮົມຈະມີທັງດ້ານຮູບພາບປະກອບ ແລະການແລກປ່ຽນຄຳຄິດເຫັນກ່ຽວກັບຮູບແບບການປູກທີ່ເປັນສວນພຶກສາຊາດລະດັບສາກົນ.

Funding: PTK





# ດອກພືດຕະກູນຂີງ-ຂ່າໃນສວນພຶກສາຊາດຜາຕັດແກ້



ພືດຕະກູນຂີງ-ຂ່າມີຄວາມຫຼາກຫຼາຍທາງດ້ານສາຍພັນມີຈຳນວນສະມາຊິກປະ ມານ 1400 ຊະນິດໃນທົ່ວໂລກ, ພວກມັນເປັນພືດມີຫົວ ຫຼື ເຫງົ້າໃຕ້ດິນອາຍຸຫຼາຍປີ. ພືດຕະກູນນີ້ມີເຂດກະຈາຍພັນຢູ່ໃນເຂດຮ້ອນຊຸ່ມຂອງໂລກເຊັ່ນ ເຂດອາຊີຕາເວັນອອກສຽງໃຕ້ ແລະ ບາງຊະນິດກະຈາຍພັນໃນອາເມລິກາ. ສຳລັບປະເທດລາວເຮົາມີການຄາດຄະເນວ່າພືດຕະກູນນີ້ຈະມີຈຳນວນຫຼາຍ 300 ຊະນິດ ໂດຍສົມທຽບກັບປະເທດເພື່ອນບ້ານໃກ້ຄຽງ. ພວກມັນມີທັງລຳຕົ້ນເປັນພືດລົ້ມລຸກປີດຽວ ແລະ ພືດລົ້ມລຸກຫຼາຍປີ ສາມາດພົບພວກມັນໄດ້ໃນສະພາບປ່າດົງດິບ, ປ່າດົງດິບແລ້ງ, ປ່າປະສົມປ່ຽນໃບ, ປ່າແປກ, ປ່າໂຄກ ແລະ ບາງຊະນິດພົບໃນພູເຂົາຫີນປູນ. ໃນປະຈຸບັນໃນສວນພຶກສາຊາດຜາຕັດແກ້ສາມາດເກັບລວບລວມໄດ້ຈຳນວນ 214 ນ້ຳເບີ ແລະ ໄດ້ປູກຮັກສາໄວ້ໃນສວນກ້າເພື່ອສຶກສາຄົ້ນຄວ້າທາງດ້ານອະນຸກົມວິຖານ ແລະ ການນຳໃຊ້ໃນອານາຄົດ. ຈຳນວນຊະນິດທີ່ສາມາດຈຳແນກໄດ້ມີ 76 ຊະນິດ ໃນຈຳນວນ 116 ນ້ຳເບີ ແລະ ຍັງບໍ່ສາມາດຈຳແນກໄດ້ຈຳນວນ 48 ນ້ຳເບີ ເພາະວ່າຍັງບໍ່ທັນເຫັນດອກ ແລະ ໝາກທີ່ໃຊ້ເປັນຕົວຈັດຈຳແນກເທື່ອ.











ຂ່າມານເຫຼືອງ -*Alpinia mutica, Zingiberaceae*

© K. Souvannakhoummane



ຂ່າມານແດງ -*Alpinia napoensis, Zingiberaceae*

© K. Souvannakhoummane



ຂ່າກົບຂາວ -*Alpinia zerumbet, Zingiberaceae*

*© K. Souvannakhoummane*



ໝາກກຸກບ້ານ -*Amoumum dealbatum, Zingiberaceae*

*© K. Souvannakhoummane*



ໝາກແໜ່ງດອກຂາວ -*Amomum repoensis, Zingiberaceae*

© K. Souvannakhoummane



ໝາກແໜ່ງໃຈເຫຼືອງ -*Amomum prionocarpum, Zinberaceae*

© K. Souvannakhoummane



ຫວ້ານຈຶດແດງ -*Boesenbergia cf. petiolata, Zingiberaceae*

*© K. Phoutthavong*



ຫວ້ານຈຶດເຫຼືອງ -*Boesenbergia sp. nov., Zingiberaceae*

© K. Phoutthavong



ຫວ້ານເອື້ອງດິນ -*Gagnepainia thoreliana, Zinbieraceae*

*© K. Phoutthavong*


ຫວ້ານໃບລາຍ -*Kaempferia rotunda*, *Zingiberaceae*

© K. Souvannakhoummane



ກະຈຽວມ່ວງດອກນ້ອຍ -*Curcuma parviflora, Zingiberaceae*

© K. Souvannakhoummane



ກະຈຽວປາກແວ້ງ -*Curcuma cf. rhomba, Zingiberaceae*

© K. Phoutthavong



ຫວ້ານດັກແດ້ -*Stahlianthus macrochlamys, Zingiberaceae*

© K. Phoutthavong

**Project Space • Luang Prabang**
*(hors les murs)*




ສະບາຍດີໝູ່ເພື່ອນທັງຫຼາຍ

ພວກເຮົາມີຄວາມສຸກຫຼາຍທີ່ຈະແຈ້ງໃຫ້ຮູ້ກ່ຽວກັບການວາງສະແດງຂອ
ງເວທີຫຼວງພຣະບາງກ່ຽວກັບງານສິນລະປະຂອງ Tcheu Siong and
Phasoa Lao

ເວທີ ຫຼວງພຣະບາງ
APPLIQUES HMONG - TCHEU SIONG & PHASAO LAO
ຢູ່ທີ່ ບ້ານນາໄຊ DE LA CULTURE, ວຽງຈັນ
ການວາງສະແດງແມ່ນ: ວັນທີ 6 - 30 ເດືອນມິຖຸນາ

ບ້ານນາໄຊ, ຖະໜົນ ໜອງບອນ
ເປີດ: ວັນຈັນ - ວັນເສົາ 10 ໂມງເຊົ້າ - 5 ໂມງແລງ

Vernissage: ວັນສຸກ ວັນທີ 6 ເດືອນມິຖຸນາ ເວລາ 6:30 ຕອນແລງ
ໂທ: 020 5561 2049 (ທານ ກິງພັດ) Baj Strobel 020 7770 4935

ເວທີ ຫຼວງພຣະບາງ
ຕູ້ໄປສະນີ 959, 06000 ຫຼວງພຣະບາງ ສປປ ລາວ

www.projectspace-luangprabang.com







